ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ຫ້ອງການກະຊວງ

ເລກທີ: 15164 /ຍທຂ.ຫກ

ນະຄອນຫຼວງວຽງຈັນ, ວັນທີ: 01 JUL 2019

ແຈ້ງຕອບຄຳສະເໜີຂອງປະຊາຊົນຜ່ານສາຍດ່ວນ1518

ຂອງຂະແໜງ ຍທຂ, ໃນລະຫວ່າງວັນທີ 27-29/5/2019

ຍທຂ ແຂວງວຽງຈັນ

1. ປະຊາຊົນບ້ານນາຕາກ, ເມືອງໝື່ນ, ແຂວງວຽງຈັນ, ສະເໜີພາກສ່ວນທີ່ຮັບຜິດຊອບເສັ້ນທາງບ້ານດັ່ງກ່າວລົງກວດກາ ແລະ ສ້ອມແປງສະພາບເສັ້ນທາງທີ່ເປ່ເພມາດົນເຮັດໃຫ້ປະຊາຊົນໄປມາລຳບາກ, ຜ່ານມາຍັງບໍ່ມີພາກສ່ວນໃດລົງໄປປັບປຸງແກ້ໄຂ, ສະນັ້ນ ຈຶ່ງຂໍໃຫ້ທາງຂັ້ນເທິງຕິດຕາມຊຸກຍູ້ຊ່ວຍດ້ວຍ.

ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງວຽງຈັນໃຫ້ຊາບວ່າ: ເສັ້ນທາງດັ່ງກ່າວແມ່ນທາງຫລວງຂອງແຂວງເລກທີ 4501, ຈຸດເລີ່ມຕົ້ນແມ່ນແຍກທາງເລກ 13 ເໜືອບ້ານຫີນເຫີບ-ເມືອງເຟືອງ-ຜ່ານບ້ານນາຕາດ-ເມືອງໝື່ນ-ບ້ານວັງແຍກທາງເລກ11 ມີໄລຍະທາງ 116 ກິໂລແມັດ, ເສັ້ນທາງດັ່ງກ່າວຢູ່ໃນສັນຍາຮັບເໝົາກໍ່ສ້າງທາງປູຢາງສອງຊັ້ນຂອງບໍລິສັດເຮືອງສີກໍ່ສ້າງຂົວທາງຈຳກັດ, ໃນຊ່ວງໄລຍະກໍ່ສ້າງແມ່ນບໍລິສັດເປັນຜູ້ຮັບຜິດຊອບໃນການບູລະນະສ້ອມແປງເສັ້ນທາງ ໃຫ້ໄປມາສະດວກຈົນກວ່າການກໍ່ສ້າງທາງປູຢາງຈະສຳເລັດ, ໃນໄລຍະຜ່ານມາບໍລິສັດກໍ່ໄດ້ສ້ອມແປງເສັ້ນທາງຊ້ອງດັ່ງກ່າວນີ້ເປັນປະຈຳ 2 ເທື່ອຕໍ່ປີ (ກ່ອນເຂົ້າລະດູຝົນ ແລະ ຫລັງລະດູຝົນ), ເສັ້ນທາງດັ່ງກ່າວບໍລິສັດໄດ້ສ້ອມແປງແລ້ວໃນເດືອນ 2/2019 ປະຈຸບັນການສັນຈອນໄປມາໄດ້ເປັນປົກກະຕິ ແຕ່ກໍ່ຫລີກລ້ຽງບໍ່ໄດ້ບັນຫາຂີ້ຝຸ່ນຍາມແລ້ງ ແລະ ເປັນບວກເປັນຂຸມໃນຍາມຝົນ ຍ້ອນຍັງເປັນທາງດິນແດງ.

ຍທຂ ຫລວງພະບາງ

1. ປະຊາຊົນເມືອງງອຍ, ແຂວງຫລວງພະບາງ, ສະເໜີໃຫ້ພາກສ່ວນຮັບຜິດຊອບລົງຊຸກຍູ້ເລື້ອງການຈ່າຍຄ່າແຮງງານຄ່າຖາງທາງຂອງ ຍທຂ ເມືອງງອຍ, ທີ່ຍັງຕິດຄ້າງປະຊາຊົນ ( ຜູ້ທີຖາງທາງ ) ແຕ່ເດືອນ 11/2018, ພ້ອມກັນນັ້ນ ກໍ່ຂໍໃຫ້ທາງຂັ້ນເທິງຕິດຕາມກວດກາຄືນວ່າການຈ່າຍຄ່າແຮງ



ພະແນກການຂ່າວ ແລະ ເຕັກໂນໂລຊີການສື່ສານ, ຫ້ອງການກະຊວງ. ໂທ : 021 451943 ແຟັກ 021 412255

ງານແຕ່ລະຄັ້ງທີ່ຜ່ານມາແມ່ນປະຊາຊົນບໍ່ໄດ້ຮັບເຕັມຈຳນວນເງິນທີ່ລະບຸໃນໃບບິນຈ່າຍເງິນແມ່ນຍ້ອນ ສາເຫດຫຍັງແທ້.

ຕອບ: ອີງຕາມການລາຍງານຂອງພະແນກ ຍທຂ ແຂວງຫລວງພະບາງ ໂດຍໄດ້ພົວພັນປະສານຫາຫົວໜ້າຫ້ອງການ ຍທຂ ເມືອງງອຍໃຫ້ຊາບວ່າ: ຂອບເຂດຮັບຜິດຊອບບູລະນະຮັກສາເສັ້ນທາງຫລວງແຫ່ງຊາດດ້ວຍແຮງງານຂອງປະຊາຊົນ ເສັ້ນທາງເລກ 1C ຂອງ ຍທຂ ເມືອງງອຍປະກອບມີ 7 ສັນຍາເລີ່ມແຕ່ກິໂລແມັດ 25+000ຫາ 60+000 (35ກິໂລແມັດ), ຜ່ານມາແມ່ນໄດ້ເບີກຈ່າຍຄ່າແຮງງານຮອດເດືອນ 12/2018 ໃຫ້ກັບທຸກສັນຍາໝົດແລ້ວ ຕາມຈຳນວນທີ່ລະບຸໄວ້ໃນສັນຍາ, ສ່ວນເລີ່ມແຕ່ເດືອນ 1/2019 ຈົນເຖິງປະຈຸບັນແມ່ນບໍ່ທັນເບີກຈ່າຍ ຍ້ອນວ່າຍັງບໍ່ໄດ້ຮັບການອະນຸມັດ ແລະ ໂອນເງິນຈາກກະຊວງ ຍທຂ ມາໃຫ້ ຍທຂ ແຂວງຫລວງພະບາງເທື່ອ, ສ່ວນການເບີກຈ່າຍຄ່າແຮງງານໃນໄລຍະຜ່ານມາ ຍທຂ ເມືອງງອຍ ກໍ່ໄດ້ຢັ້ງຢືນວ່າໄດ້ຈ່າຍຄົບຖ້ວນຕາມຈຳນວນທີ່ລະບຸໄວ້ໃນສັນຍາ, ລາຍລະອຽດແມ່ນມີເອກະສານຢັ້ງຢືນການຈ່າຍເງິນຄັດຕິດມາພ້ອມ.

<u>ຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ</u>

1. ປະຊາຊົນບ້ານໂພນທອງເໜືອ, ເມືອງຫີນເຫີບ, ແຂວງວຽງຈັນ ຜູ້ຖືກຜົນກະທົບຈາກໂຄງການທາງລົດໄຟລາວ-ຈີນ, ຂໍຄວາມກະຈ່າງແຈ້ງຈາກຜູ້ຮັບຜິດຊອບວຽກງານດັ່ງກ່າວ ວ່າເປັນຫຍັງບາງຄອບຄົວໄດ້ຮັບການຊົດເຊີຍແລ້ວ, ແຕ່ບາງຄອບຄົວຍັງບໍ່ໄດ້ຮັບການຊົດເຊີຍ, ມາຮອດປະຈຸບັນກໍ່ບໍ່ມີພາກສ່ວນໃດລົງມາຕາມການນັດໝາຍ (ແຕ່ເດືອນ 7/2018). ສະນັ້ນ, ຈຶ່ງຂໍໃຫ້ທາງຂັ້ນເທິງຊ່ວຍຊຸກຍູ້ຕິດຕາມຊ່ວຍດ້ວຍ.

ຕອບ: ອີງຕາມການລາຍງານຂອງຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນໃຫ້ຊາບວ່າ: ການຊົດເຊີຍຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ຕາມການສະເໜີຂອງປະຊາຊົນບ້ານໂພນທອງເໜືອ, ເມືອງຫີນເຫີບ, ແຂວງວຽງຈັນທີ່ວ່າ ມີບາງຄອບຄົວຍັງບໍ່ທັນໄດ້ຮັບຄ່າຊົດເຊີຍນັ້ນ, ເນື່ອງຈາກອີງໃສ່ເງິນຊົດເຊີຍມີບໍ່ພຽງພໍ, ສະນັ້ນ ຄະນະກຳມະການແຂວງວຽງຈັນ ຈຶ່ງເລືອກຊົດເຊີຍແຕ່ປະເພດທີ່ມີສິ່ງປຸກສ້າງກ່ອນ (ຊົດເຊີຍແຕ່ຄອບຄົວທີ່ຖືກເຮືອນ) ເພື່ອໃຫ້ເຂົາເຈົ້າໄດ້ມີເວລາໄປຕັ້ງເຮືອນຢູ່ບ່ອນໃໝ່, ສ່ວນຄອບຄົວທີ່ຖືກແຕ່ປະເພດດິນນັ້ນຍັງບໍ່ທັນໄດ້ຊົດເຊີຍດັ່ງຄຳສະເໜີຂອງປະຊາຊົນ, ປະຈຸບັນກຳລັງລໍຖ້າການຂໍອະນຸມັດຈັດສັນງົບປະມານຄ່າຊົດເຊີຍປະຈຳປີ 2019.

ຫົວໜ້າຫ້ອງການກະຊວງ

ບຸນຈັນ ສິນທະວົງ



ພະແນກການຂ່າວ ແລະ ເຕັກໂນໂລຊີການສື່ສານ, ຫ້ອງການກະຊວງ. ໂທ : 021 451943 ແຟັກ 021 412255